ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ທະນາຄານທະນາຊາດ (TBank) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຮ່ວມກັນລິເລີ່ມການບໍລິການຊໍາລະສະສາງຂ້າມຊາຍແດນຜ່ານລະບົບ QR Code

ທະນາຄານທະນາຊາດ (TBank) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ໄດ້ມີການນໍາສະເໜີວິທີການຊໍາລະສະສາງຂ້າມຊາຍແດນຂາອອກໂດຍໃຊ້ເທກໂນໂລຍີລະບົບ QR Code ໃນໂທລະສັບມືຖືຄັ້ງທໍາອິດໃນງານ ASEAN Payment Connectivity Exhibition ທີ່ຈະຈັດຂຶ້ນທີ່ ຊຽງລາຍໃນວັນທີ 04 ເມສາ ປີ 2019 ນີ້.





ວິທີການຊໍາລະສະສາງນີ້ຖືກສ້າງຂຶ້ນຈາກຄວາມສໍາເລັດຂອງບໍລິການຊໍາລະສະສາງຂ້າມພົມແດນຜ່ານລະບົບQR Code ເມື່ອປີ 2018 ທີ່ຜ່ານມາ, ເຊິ່ງໄດ້ຮັບການພັດທະນາຮ່ວມກັນລະຫວ່າງ ທະນາຄານທະນາຊາດ (TBANK) ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ທີ່ເປັນທະນາຄານຊັ້ນນໍາດ້ານເທັກໂນໂລຍີ e-Banking ທີ່ມີສ່ວນແບ່ງການຕະຫຼາດສູງສຸດໃນ ສປປ ລາວ. ການບໍລິການຊໍາລະສະສາງຂ້າມຊາຍແດນເບື້ອງຂາເຂົ້າຜ່ານ QR Code ຈະຊ່ວຍໃຫ້ລູກຄ້າ BCEL ຊໍາລະຄ່າສິນຄ້າໃນປະເທດໄທໄດ້ແບບ Real Time ພຽງແຕ່ສະແກນ QR Code ຂອງຮ້ານຄ້າຢູ່ປະເທດໄທ ດ້ວຍຟັງຊັນຊໍາລະເງິນ QR Scan “BCEL OnePay” ໃນ Application ມືຖື BCEL One. ເມື່ອລະບົບສໍາລະສະສາງມີການກວດສອບລະຫວ່າງທະນາຄານສໍາເລັດສົມບູນ, ທະນາຄານທະນາຊາດ TBANK ຈະດໍາເນີນການໂອນເງິນພາຍໃນປະເທດໄທໃນນາມຂອງ BCEL ໄປຍັງບັນຊີຂອງຮ້ານຄ້າໄທແຕ່ລະຮ້ານເພື່ອໃຫ້ໝັ້ນໃຈເຖິງຄວາມປອດໄພໃນການຊໍາລະເງິນຈາກຜູ້ຊື້ ຫາ ຜູ້ຂາຍ.

 

ເພື່ອມອບປະສົບການການຊໍາລະສະສາງຂ້າມຊາຍແດນຜ່ານມືຖືໄປສູ່ອີກລະດັບໜຶ່ງ, ໃນປີ 2019 ນີ້ TBANK ຮ່ວມມືກັບ BCEL ໄດ້ເພີ່ມບໍລິການຊໍາລະເງິນ QR Code ຂ້າມຊາຍແດນເບື້ອງຂາອອກ ຊຶ່ງຈະຊ່ວຍໃຫ້ ລູກຄ້າຂອງ TBANK ຫຼື ລູກຄ້າຄົນໄທທີ່ເດີນທາງມາປະເທດລາວ ສາມາດຊໍາລະຄ່າສິນຄ້າທີ່ຮ້ານຄ້າທີ່ມີ OnePay ໄດ້ທັນທີຜ່ານ PromptPay ການຊໍາລະເງິນທາງມືຖືທີ່ເປັນຂອງທະນາຄານໄທໄດ້ເຊັ່ນ ນໍາໃຊ້ "ທະນາຊາດ Connect" ສໍາລັບລູກຄ້າຂອງ TBANK. ໂດຍ Application ຂອງທະນາຄານໄທ ຈະອ່ານລະຫັດ QR ຂອງຮ້ານຄ້າໃນປະເທດລາວ ແລະ ຈະສະແດງລາຍລະອຽດຂໍ້ມູນການຊໍາລະເງິນໂດຍອັດຕະໂນມັດເຊັ່ນ: ລາຍລະອຽດຂອງລາຍການທີ່ຊື້, ລາຄາທັງໝົດເປັນເງິນກີບ ແລະ ເງິນບາດ. ໃນການເພີ່ມຜະລິດຕະພັນໃໝ່ນີ້ຈະອໍານວຍຄວາມສະດວກໃຫ້ການຊໍາລະເງິນຂ້າມຊາຍແດນ ເຊິ່ງຈະເພີ່ມຄວາມໄວໃນການເຮັດທຸລະກໍາ, ຫຼຸດຜ່ອນຕົ້ນທຶນການໃຊ້ເງິນສົດ, ເພີ່ມຄວາມສະດວກສະບາຍ ແລະ ຄວາມປອດໄພ.